# ບົດທີ 17

# ການປະກາດໃນແຂວງຢູດາ ແລະ ຊາມາເລຍ

ການປະກາດພະທຳໃນແຂວງຢູດາ ແລະຊາມາເລຍ ເລີ້ມຕົ້ນໃນພະທຳ ກຈກ ບົດທີ 8 ກ່ອນຈະລົງມືຮຽນເລື່ອງນັ້ນເຮົາຈະທວນຄືນ. ຊາມາເລຍ ຢູດາ




**1** ໃນຫຼັກສູດມັດທາຍ ເຫຼັ້ມທີ 6 ນີ້ ໃນບົດທີ 6 ເຮົາເລີ້ມຮຽນເລື່ອງການວິໄຈ ພະທຳກິດຈະການ.

ກ. ໃຈຄວາມສຳຄັນຂອງພະທຳກິດຈະການຢູ່ໃນບົດແລະຂໍ້ໃດ? ____________________

ຂ. ແບ່ງການປະກາດພະທຳເປັນຈັກພາກ? ____________________

ຄ. ພາກໃດແດ່? (ຕື່ມຄວາມທີ່ຂາດ)

ເຂດກຸງ ____________________

ເຂດແຂວງ ____________________ ແລະ ____________________

ແລະເຖິງ ____________________

**2** ໃຫ້ອ່ານ ກຈກ 8:1

ກ. ມາເຖິງຄວາມຕາຍຂອງຊະເຕຟາໂນ ຂ່າວປະເສີດແຜ່ອອກໄປໃນບ່ອນດຽວຄືບ່ອນໃດກ່ອນ? ____________________

ຂ. ຫຼັງຈາກຊະເຕຟາໂນຕາຍແລ້ວ ພວກຄຼິດສະຕຽນແຕກກະຈັດກະຈາຍໄປໃສ?

____________________ ແລະ ____________________

ຄ. ການປ່າວປະກາດຂ່າວປະເສີດພາກທີສອງ (ຂອບເຂດທີສອງກໍວ່າໄດ້) ເລີ້ມຕົ້ນໃນກິດຈະການບົດໃດ? ____________________

**3** ໃຫ້ອ່ານ ກຈກ 8:1 ອີກ ແລະຂໍ້ທີ 2-4 ດ້ວຍ.

ກ. ເກີດມີການຂົ່ມເຫັງອັນໃຫຍ່ຕໍ່ໃຜ? ____________________

ຂ. ໃນຂໍ້ 3 ແມ່ນໃຜພະຍາຍາມທຳລາຍຄຼິດສະຕະຈັກ? ____________________

ຄ. ເມື່ອພວກຄຼິດສະຕຽນທີ່ແຕກກະຈັດກະຈາຍໄປນັ້ນ ພາກັນເຮັດຫຍັງ? ____________________

____________________

**4** ຫຼາຍເທື່ອຕໍ່ຫຼາຍທີ ທີ່ພະຍາມານລົງມືຈະທຳລາຍຄຼິດສະຕະຈັກ ຍິ່ງທຳລາຍໄປຄຼິດສະຕະຈັກຍິ່ງມີໄຊຂຶ້ນ. ທີ່ຊະເຕຟາ ໂນຖືກເຂົາຂ້ານັ້ນ ມີຜົນຮັບວ່າ ພວກຄຼິດສະຕຽນແຕກກະຈັດກະຈາຍໄປປ່າວປະກາດຂ່າວ ປະເສີດຫຼາຍບ່ອນ.

ກ. ເຂົາແຕກອອກຈາກກຸງໃດ? ______________________________

ຂ. ໄປປ່າວປະກາດໃນສອງແຂວງໃດ? ______________ ແລະ ____________

**5** ໃນບົດຮຽນນີ້ຈະຮຽນເລື່ອງການປ່າວປະກາດຂອງຟີລິບໃນແຂວງຢູດາແລະຊາມາເລຍ.ໃຫ້ອ່ານ ກຈກ 8:5

ກ. ຟີລິບຕັ້ງຕົ້ນປ່າວປະກາດໃນແຂວງໃດ? ______________________

ຂ. ຟີລິບເຂົ້າຮ່ວມກັບຄຼິດສະຕະຈັກໃດ ກ່ອນຈະໜີອອກ? ________________

ຄ. ເພິ່ນຮັບພາລະໃດໃນຄຼິດສະຕະຈັກນັ້ນ? (ກຈກ 6:5) ________________

**6** ໃຫ້ອ່ານ ກຈກ 8:6 ແລະ 8:12.

ກ. ຄຳເທດສະໜາຂອງຟີລິບໃນແຂວງຊາມາເລຍ ມີຜົນຮັບຢ່າງໃດ? ____________

ຂ. ຊະເຕຟາໂນເປັນຊາດໃດ (ຈາກກຸງເຢລູຊາເລັມ)? ____________________

ຄ. ທຳມະດາຊາວຊາມາເລຍ ພ້ອມໃຈຈະຟັງຄວາມຈາກຊາວຢິວບໍ່? ____________



**7** ມີສາເຫດຫຼາຍປະການທີ່ຊາວຊາມາເລຍກຽດຊັງຄົນຢິວ. ໃນຄຳບັນລະຍາຍເລື່ອງຊາວຊາມາເລຍ ໃຫ້ທ່ານຂີດຂ້າ ອອກຄຳໃດທີ່ບໍ່ຈິງ.

ກ. ຊາວຊາມາເລຍ ເປັນເຊື້ອສາຍຢິວຢ່າງແທ້ຈິງ.

ຂ. ເປັນຊາດປະສົມລະຫວ່າງຄົນຢິວຈາກອານາຈັກອິດສະລາເອນແລະຊາວອັດຊີເລຍຕັ້ງແຕ່ 700 ກຄສ ທີ່ຈັກກະພັດ ອັດຊີເລຍມາຍຶດເອົາ.

ຄ. ຊາວຊາມາເລຍຖືກເນລະເທດໄປ ບາບີໂລນໃນປີ 600 ກຄສ

ງ. ໃນສະໄໝຂອງເອັດຊະລາ ແລະເນເຫມີ ພວກຊາມາເລຍຕໍ່ສູ້ການກໍ່ສ້າງພະວິຫານແລະກຳແພງກຸງເຢລູຊາເລັມ ຊາວຢິວຈຶ່ງກຽດຊັງຊາວຊາມາເລຍ.

ຈ. ຊາວຊາມາເລຍສ້າງພະວິຫານຂອງເຂົາເອງຢູ່ພູກາລິຊິມ.

ສ. ຊາວຊາມາເລຍມີສິດເຂົ້າພະວິຫານໃນກຸງເຢລູຊາເລັມເໝືອນຢ່າງຊາວຢິວ.

**8** ເຖິງວ່າຊາວຊາມາເລຍ ກັບຊາວຢິວກຽດຊັງກັນປານນັ້ນກໍຕາມ ແຕ່ເປັນການອັດສະຈັນມາຈາກພະເຈົ້າ ທີ່ເຂົາຍອມຟັງ ການປ່າວປະກາດຈາກຄົນຢິວ. ຄົນຢິວທີ່ປະກາດພະທຳໃນຊາມາເລຍນັ້ນຊື່ຫຍັງ? ____________________

**9** ໃນໂຢຮັນ ບົດທີ 4 ທີ່ເຫັນພະເຢຊູປະກາດໃຫ້ຍິງຊາວຊາມາເລຍ. ຂໍ້ 40-42 ເຫັນວ່າມີຄົນຫຼວງຫຼາຍເຊື່ອພະອົງ. ອາດຈະແມ່ນແຕ່ພະເຢຊູຫວ່ານກ່ອນ ແລະຟີລິບມາເກັບກ່ຽວທີຫຼັງ.

ກ. ແມ່ນໃຜປະກາດຂ່າວປະເສີດໃນຊາມາເລຍກ່ອນ? ____________________

ຂ. ມີຜົນຮັບຢ່າງໃດ? (ໂຢຮັນ 4:39) ____________________

**10** ໃນໂຢຮັນ 4:36 ພະເຢຊູບອກວ່າ "ຜູ້ຫວ່ານແລະຜູ້ກ່ຽວຈະຊົມຊື່ນຍິນດີພ້ອມກັນ"

ກ. ໃຜເປັນຜູ້ຫວ່ານໃນຊາມາເລຍ? ____________________

ຂ. ໃຜເປັນຜູ້ເກັບກ່ຽວຕໍ່ໄປ? ____________________

**11** ກ. ເມື່ອໂຊໂລເລີ້ມຕົ້ນໃນການຂົ່ມເຫັງ ພວກສາວົກພາກັນຢູ່ໃສ? ____________________

ຂ. ພວກສາວົກເຫັນວ່າຊາວຊາມາເລຍຮັບເອົາພະທຳເຂົາເຮັດຢ່າງໃດຈຶ່ງຈະສວຍໂອກາດໃຫ້ດີ? (ກຈກ 8:14) ____________________

____________________



**12** ເຫັນວ່າໂຢຮັນປ່ຽນທ່າທີຫຼາຍແລ້ວ. ໃນປີທີ່ສຳເລັດທີ່ທ່ານຮຽນມາແລ້ວ ພະເຢຊູຈະເດີນທາງຈາກຄາລີເລໄປເທດສະ ການຕັ້ງທັບອາໄສໃນກຸງເຢລູຊາເລັມ. ພະອົງຈະເດີທາງຜ່ານແຂວງຊາມາເລຍ.

ກ. ໃນ ລກ 9:53 ຊາວຊາມາເລຍກະທຳຢ່າງໃດ? ____________________

ຂ. ຢາໂກໂບແລະໂຢຮັນຢາກເຮັດຫຍັງ? (ລກ 9:54) ____________________

____________________

ຄ. ພະເຢຊູຕອບຢ່າງໃດ? ____________________

**13** ກ. ໃນ ກຈກ 8:15-17 ນີ້ ທ່າທີຂອງໂຢຮັນປ່ຽນຫຼາຍ. ໂຢຮັນກັບເປໂຕເຮັດຫຍັງຕໍ່ຊາວຊາມາເລຍນັ້ນ ເຂົາຈຶ່ງໄດ້ຮັບ ພະວິນຍານບໍລິສຸດ? ____________________

ຂ.ທ່າທີຂອງໂຢຮັນປ່ຽນໄປຫຼາຍແທ້ ເພາະໃນວັນເພັນເຕຄໍສະເຕ ເພິ່ນໄດ້ເຕັມໄປດ້ວຍຫຍັງ?

____________________

**14** ຕັ້ງແຕ່ໂຢຮັນໄດ້ຮັບພະວິຍານບໍລິສຸດ ເພິ່ນຢູ່ໃຕ້ການປົກຄອງຂອງວິນຍານຂອງພະເຈົ້າເໝືອນພະເຢຊູ.

ກ. ໃນໂຢຮັນ ບົດທີ 4 ເຫັນຄວາມຮັກຂອງພະເຢຊູຕໍ່ຊາວຊາມາເລຍຢ່າງໃດ? __________

______________________________________________________________

ຂ. ໂຢຮັນມີທ່າທີຄ້າຍຄືກັບພະເຢຊູຍ້ອນຫຍັງ? ______________________________

______________________________________________________________

**15** ໂຢຮັນໄດ້ຮັບພະວິນຍານບໍລິສຸດກ່ອນ ແລ້ວຕໍ່ໄປພະເຈົ້າໃຊ້ເພິ່ນໃນການທີ່ຊາວຊາມາເລຍຈະຮັບພະວິນຍານບໍລິສຸດ ດ້ວຍ.

ກ. ໂຢຮັນເຮັດຢ່າງໃດກັບເຂົາທີ່ເປັນສັນຍາລັກໃນການຮັບພະວິນຍານ? ______________

ຂ. ຄວາມກຽດຊັງຂອງໂຢຮັນກາຍເປັນຄວາມຮັກ. ໃນຄາລາເຕຍ 5:22 ສອນວ່າຄວາມຮັກຄືຜົນຂອງໃຜ? ______________________________________________

**16** ເປໂຕແລະໂຢຮັນທີ່ເປັນຊາວຢິວ ເອົາມືວາງໃສ່ຫົວຊາວໃດ? ______________________ ນັ້ນແຫຼະ ຄືຜົນຂອງພະວິນຍານບໍລິສຸດແທ້.

**17** ກ. ໂຢຮັນຢາກປ້ອຍດ່າຊາວຊາມາເລຍກ່ອນວັນເພັນເຕຄໍສະເຕ ຫຼືທີຫຼັງ? _____________

ຂ. ຫຼັງຈາກວັນເພັນເຕຄໍສະເຕ ທ່າທີຂອງເພິ່ນປ່ຽນໄປຢ່າງໃດ? __________________

ຄ. ເປັນຫຍັງເພິ່ນຈຶ່ງປ່ຽນ? _____________________________________________

**18** ຈະຮຽນຄືນ:

ກ. ກ່ອນຊະເຕຟາໂນບໍ່ໄດ້ຕາຍເທື່ອ ລູກສິດຂອງພະອົງປ່າວປະກາດສະເພາະໃນກຸງໃດ?

______________________________________________________________

ຂ. ຫຼັງຈາກເພິ່ນຕາຍແລ້ວ ເຂົາປະກາດພະທຳໃນສອງແຂວງໃດ? __________________

ຄ. ເລື່ອງນັ້ນ ບັນທຶກໄວ້ໃນພະທຳກິດຈະການບົດໃດ? __________________________

ງ. ເຂົາກະຈັດກະຈາຍໄປຈາກເຢລູຊາເລັມຍ້ອນສາເຫດໃດ? _____________________

ຈ. ຄົນຜູ້ໜຶ່ງທີ່ສະໜັບສະໜູນການຂົ່ມເຫັງນັ້ນຄືໃຜ? ___________________________

ສ. ເມື່ອພວກລູກສິດນັ້ນອອກໄປໃນແຂວງຢູດາແລະຊາມາເລຍແລ້ວ ເຂົາປະກາດຫຍັງ?

______________________________________________________________

ຊ. ຟີລິບເຄີຍຮັບພາລະຢ່າງໃດໃນຄຼິດສະຕະຈັກກຸງເຢລູຊາເລັມ? __________________

ຍ. ຕໍ່ໄປເພິ່ນໄປປ່າວປະກາດຢູ່ໃສ? _______________________________________

ດ. ຟີລິບໄປເທດສະໜາໃນແຂວງຊາມາເລຍ ຫຼາຍຄົນຮັບຫຍັງ? __________________

ຕ. ແຕ່ກ່ອນຊາວຢິວກັບຊາວຊາມາເລຍເຄີຍເປັນຢ່າງໃດກັນ? ____________________

ຖ. ແມ່ນໃຜທີ່ເຄີຍປ່າວປະກາດໃນຊາມາເລຍກ່ອນ? __________________________

ທ. ພະອົງສົນທະນາກັບໃຜໃນແຂວງຊາມາເລຍ? _____________________________

ນ. ຕໍ່ໄປເມື່ອພະອົງຈະເດີນທາງຈາກຄາລີເລໄປເທດສະການຕັ້ງທັບອາໄສຢູ່ກຸງເຢລູຊາເລັມ ພະອົງຕັ້ງໃຈຈະລັດໄປ ທາງໃດ? ____________________________________

ບ. ຊາວຊາມາເລຍຍິນດີຕ້ອນຮັບບໍ່? ________________________________

ປ. ແມ່ນສາວົກສອງຄົນໃດຢາກແກ້ແຄ້ນ? ______________________________

ຜ. ເຂົາຢາກເຮັດຫຍັງ? ______________________________________

ຝ. ພະເຢຊູຕອບເຂົາຢ່າງໃດ? ___________________________________

ພ. ຕັ້ງແຕ່ຊາວຊາມາເລຍຫຼາຍຄົນມາຮັບເຊື່ອໃນພະເຢຊູ ມີສາວົກສອງຄົນໃດມາວາງມືໃສ່ເຂົາໃຫ້ຮັບພະວິນຍານ? ______________________________________

ຟ. ທ່າທີຂອງໂຢຮັນປ່ຽນໄປຫຼາຍ ເພາະເພິ່ນຮັບຫຍັງໃນວັນເພັນເຕຄໍສະເຕ? __________

ມ. ໃນເມື່ອເປໂຕແລະໂຢຮັນວາງມືໃສ່ເຂົາ ຊຶດສະຕຽນໃໝ່ໃນຊາມາເລຍນັ້ນເຕັມໄປໂດຍຫຍັງ? ____________________________________________________

**19** ມີຄົນຜູ້ໜຶ່ງໃນຈຳພວກນັ້ນທີ່ຢາກຮັບປະໂຫຍດສ່ວນຕົວ ຄົນນັ້ນຊື່ຊີໂມນ.

ກ. ຊີໂມນນັ້ນເຄີຍເປັນໝໍຢ່າງໃດ? (ກຈກ 8:9) ___________________________

ຂ. ຊີໂມນຮັບສິນໃດ? (ກຈກ 8:13) ____________________________________

**20** ເປັນຫຍັງເຮົາຮູ້ວ່າ ຊີໂມນຮັບສິນນັ້ນຢ່າງບໍ່ຈິງໃຈ? (ກຈກ 8:18-19) _______________

____________________________________________________________

**21** ຊີໂມນຫຼົງຜິດໃນສອງດ້ານໃດ? (ໃຫ້ເລືອກໝາຍເອົາສອງຂໍ້)

ກ. ______ ເພິ່ນຢາກມີຄວາມຮັກ ສັນຕິສຸກ ແລະ ຄວາມສຸກ

ຂ. ______ ຢາກມີອຳນາດຂອງພະວິນຍານເພື່ອເປັນປະໂຫຍດສ່ວນຕົວ

ຄ. ______ ຢາກຖ່ອມຕົວລົງເໝືອນພະເຢຊູ

ງ. ______ ຢາກຮັບພະຄຸນຈຶ່ງຈະເທດສະໜາປ່າວປະກາດ

ຈ. ______ ຢາກຊື້ພະວິນຍານບໍລິສຸດດ້ວຍເງິນ



**22** ໃຫ້ອ່ານ ກຈກ 8:9-10

ກ. ເພິ່ນເຮັດການເວດມົນນັ້ນ ເພື່ອໃຫ້ໄທເມືອງນັ້ນເປັນຢ່າງໃດ? ________________

ຂ. ໄທເມືອງນັ້ນຖືວ່າຊີໂມນເປັນອະນຸພາບໃດ? ______________________________

**23** ເຖິງວ່າຊີໂມນນັ້ນຮັບສິນບັບຕິສະມາແລ້ວກໍຕາມ ແຕ່ທ່າທີຂອງເພິ່ນບໍ່ປ່ຽນ.

ໃນ ກຈກ 8:21-22 ເຫັນວ່າ ໃຈຂອງເພິ່ນຫຼົງຜິດໄປຢ່າງໃດ? ____________________

**24** ເປໂຕບອກເພິ່ນວ່າ ຈົ່ງຫຼີບຕັ້ງໃຈໃໝ່ຈາກການຊົ່ວ. ໃນ ກຈກ 8:24 ເຫັນວ່າ ເພິ່ນບໍ່ຢາກຖືກໂທດຈາກພະເຈົ້າແຕ່ເຫັນວ່າເພິ່ນຫຼີບຕັ້ງໃຈໃໝ່ບໍ່? ___________________________

**25** ພະຄໍາພີບໍ່ໄດ້ບັນທຶກເລື່ອງຂອງຊີໂມນນັ້ນອີກ. ຕາມປະຫວັດສາດລາຍງານ ຊີໂມນກາຍເປັນໝໍເວດມົນທີ່ມີຊື່ ສຽງແລ້ວສຸດທ້າຍເພິ່ນຕາຍຍ້ອນຄວາມຊົ່ວນັ້ນ. ບາບຂອງຊີໂມນບໍ່ແມ່ນດ້ານວັດຖຸສິ່ງຂອງ ແມ່ນແຕ່ເພິ່ນຢາກມີ ອໍາ ນາດຂອງ ພະວິນຍານຈຶ່ງຈະເປັນປະໂຫຍດແກ່ໃຜ? ____________________________________________

*ຄົນທີ່ເຕັມໄປດ້ວຍພະວິນຍານບໍລິສຸດ ບໍ່ຖືຕົວວ່າສໍາຄັນກວ່າໝູ່ ບໍ່ອວດອ້າງວ່າຕົວເອງຮັກພະເຈົ້າຫຼາຍກວ່າໝູ່ ບໍ່ຖືອໍານາດເໜືອໝູ່ ບໍ່ຢາກບັງຄັບໝູ່. ຄົນທີ່ເຕັມໄປດ້ວຍພະວິນຍານບໍລິສຸດຈະຖ່ອມຕົວລົງເ ໝືອນພະເຢຊູ.*

**26** ໃນໂຢຮັນ 13:4-5 ພະເຢຊູຖ່ອມຕົວລົງເຮັດຫຍັງ? ____________________________

**27** ຊີໂມນຕົກໃນການທົດລອງຢ່າງໃດ? (ເລືອກ)

ກ. ______ ທົດລອງດ້ານເພດ

ຂ. ______ ຢາກມີອໍານາດ

ຄ. ______ ທົດລອງໃນດ້ານວັດຖຸ



**28** ການອວດເລື່ອງຂອງພະລາຊະທານທີ່ພະເຈົ້າປະທານໃຫ້ອັນຕະລາຍຫຼາຍ.  ຄົນໃນຊາມາເລຍທີ່ຕົກໃນບາບນັ້ນຊື່ຫຍັງ? ____________________________________

*ຄົນເຮົາໃນທຸກວັນນີ້ ຕ້ອງລະວັງຕົວຢ່າອວດເລື່ອງຂອງປະທານທີ່ເຮົາໄດ້ຮັບມາຈາກພະວິນຍານ.*

**29** ໃນ ກຈກ 8:17 ພວກສາວົກເຮັດຫຍັງ ຄຼິດສະຕຽນຊາວຊາມາເລຍຈຶ່ງເຕັມໄປດ້ວຍພະວິນຍານ? ____________________________________________

*ມີບາງຄົນທີ່ຍົກຂໍ້ນີ້ເປັນຫຼັກຖານວ່າ ມີແຕ່ທາງເສັ້ນດຽວທີ່ເຮົາຈະເຕັມໄປໂດຍພະວິນຍານຄືຕ້ອງວາງມືໃສ່. ໃນ ກິດຈະການ ບົດທີ 2 ທີ່ລາຍງານເລື່ອງການສະເດັດມາຂອງພະວິນຍານບໍລິສຸດໃນວັນເພັນເຕຄໍສະເຕ ເຫັນວ່າເຂົາເຕັມ ໄປໂດຍພະວິນຍານບໍລິສຸດໂດຍບໍ່ມີເງື່ອນໄຂວ່າຈະຕ້ອງວາງມືໄວ້ກ່ອນ.*

**30** ຊາວຊາມາເລຍເປັນຊາດປະສົມບໍ່ແມ່ນຊາວຢິວສິດໆ ບໍ່ໄດ້ຖືວ່າເປັນຊາດຢິວແທ້ ແຕ່ບໍ່ຖືວ່າເປັນຄົນຕ່າງປະເທດອີກ ດ້ວຍ. ມາເຖິງນີ້ ມີແຕ່ຄົນຢິວຮັບເຊື່ອໃນພະເຢຊູ ແລ້ວຈົນເຖິງເວລານີ້ພວກສາວົກຄິດວ່າ ມີແຕ່ຄົນຢິວທີ່ມີສິດເປັນຄຼິດ ສະຕຽນ ໄດ້. ເປັນຫຍັງພະເຈົ້າໃຫ້ພວກຊາມາເລຍຮັບພະວິນຍານບໍລິສຸດຢ່າງນີ້? (ເລືອກຂໍ້ດຽວ)

ກ. ______ ເພື່ອໃຫ້ຊາວຊາມາເລຍອວດວ່າ ເຂົາມີລິດເດດຫຼາຍ.

ຂ. ______ ເພາະພວກສາວົກຕ້ອງການຮັບພະວິນຍານອີກ.

ຄ. ______ ເພື່ອເປັນຫຼັກຖານວ່າ ຊາວຊາມາເລຍຮັບພະວິນຍານໄດ້ເໝືອນຢ່າງຊາວຢິວ.

**31** ຮຽນຄືນອີກ ແມ່ນໂດຍສາເຫດໃດທີ່ພວກຄຼິດສະຕຽນໃນກຸງເຢລູຊາເລັມກະຈັດກະຈາຍໄປປ່າວປະກາດໃນແຂວງຢູດາ ແລະຊາມາເລຍ? (ໃຫ້ຕອບເຫດການສອງປະການ)

________________________________ ແລະ ________________________________

**32** ແມ່ນຄຼິດສະຕຽນຄົນໃດທີ່ເປັນຄົນທຳອິດໄປປ່າວປະກາດຂ່າວປະເສີດໃນແຂວງຊາມາເລຍ?

*ຢ່າລືມບົດເສັງ*

## ຄຳຕອບ:

**1** *ກ. ກຈກ 1:8 ຂ. 3*

*ຄ. ເຢລູຊາເລັມ ຢູດາ… ຊາມາເລຍ ທີ່ສຸດປາຍແຜ່ນດິນໂລກ*

**2** *ກ. ກຸງເຢລູຊາເລັມ ຂ. ແຂວງຢູດາ ແລະແຂວງຊາມາເລຍ ຄ. ບົດ 8*

**3** *ກ. ຄຼິດສະຕະຈັກທີ່ກຸງເຢລູຊາເລັມ ຂ. ໂຊໂລ*

*ຄ. ປະກາດຂ່າວປະເສີດແຫ່ງພະທຳຕາມບ່ອນຕ່າງ ໆ*

**4** *ກ. ເຢລູຊາເລັມ ຂ. ຢູດາ ແລະ ຊາມາເລຍ*

**5** *ກ. ຊາມາເລຍ ຂ. ເຢລູຊາເລັມ ຄ. ດູແລເລື່ອງການກິນການດື່ມ*

**6** *ກ. ເຂົ້າຮັບເຊື່ອ ຂ. ຍິວ ຄ. ບໍ່ພ້ອມ*

**7** *ຂີດຂ້າອອກ ກ ຄ ແລະ ສ*

**8** *ຟີລິບ*

**9** *ກ. ພະເຢຊູ ຂ. ຄົນຫຼວງຫຼາຍເຊື່ອ*

**10** *ກ. ພະເຢຊູ ຂ. ຟີລິບ*

**11** *ກ. ກຸງເຢລູຊາເລັມ ຂ. ໃຊ້ເປໂຕກັບໂຢຮັນໄປຫາເຂົາ*

**12** *ກ. ບໍ່ຕ້ອນຮັບພະອົງ ຂ. ຢາກໃຫ້ໄຟລົງມາຈາກສະຫວັນເພື່ອເຜົາຜານເຂົາເສຍ*

*ຄ. ພະອົງຫ້າມປາມເຂົາ*

**13** *ກ. ອ້ອນວອນ ແລະວາງມືໃສ່ເຂົາ ຂ. ພະວິນຍານບໍລິສຸດ*

**14** *ກ. ພະອົງປາກກັບເຂົາ ແລະປະທັບຢູ່ກັບເຂົາ*

*ຂ. ຍ້ອນເຕັມໄປດ້ວຍພະວິນຍານບໍລິສຸດ*

**15** *ກ. ວາງມືໃສ່ ຂ. ພະວິນຍານບໍລິສຸດ*

**16** *ຊາມາເລຍ*

**17** *ກ. ກ່ອນວັນເພັນເຕຄໍສະເຕ ຂ. ເພິ່ນຮັກເຂົາແລ້ວ*

*ຄ. ເພິ່ນເຕັມໄປດ້ວຍພະວິນຍານບໍລິສຸດ*

**ຄໍາຕອບ (ຕໍ່):**

**18** *ກ. ເຢລູຊາເລັມ ຂ. ຢູດາແລະຊາມາເລຍ ຄ. ບົດ 8 ງ. ການຂົ່ມເຫັງ*
*ຈ. ໂຊໂລ ສ. ຂ່າວປະເສີດ ຊ. ດູແລເລື່ອງການກິນດື່ມ ຍ. ຊາມາເລຍ*
*ດ. ເຂົາຮັບເຊື່ອ ຕ. ເຂົາກຽດຊັງກັນ ຖ. ພະເຢຊູ ທ. ຍິງຊາວຊາມາເລຍ*
*ນ. ຊາມາເລຍ ບ. ບໍ່ຕ້ອນຮັບ ປ. ຢາໂກໂບ ແລະໂຢຮັນ*
*ຜ. ຢາກໃຫ້ໄຟລົງມາຈາກສະຫວັນເພື່ອເຜົາຜານເຂົາ*
*ຝ. ພະອົງຫ້າມປາມເຂົາ ພ. ເປໂຕ ແລະ ໂຢຮັນ ຟ. ພະວິນຍານບໍລິສຸດ*
*ມ. ພະວິນຍານບໍລິສຸດ*

**19** *ກ. ໝໍເວດມົນ ຂ. ບັບຕິສະມາ*

**20** *ເພາະວ່າເພິ່ນນໍາເງິນມາຈະຊື້ເອົາພະວິນຍານ*

**21** *ຂ ຈ ຖືກ*

**22** *ກ. ໃຫ້ງຶດງໍ້ອັດສະຈັນໃຈ ຂ. ອະນຸພາບຂອງພະເຈົາ*

**23** *ບໍ່ສັດຊື່ຕໍ່ພະເຈົາ*

**24** *ບໍ່*

**25** *ເພິ່ນເອງ*

**26** *ລ້າງຕີນຂອງພວກສາວົກ*

**27** *ຂ ຖືກ*

**28** *ຊີໂມນ*

**29** *ເຂົາວາງມືໃສ່*

**30** *ຄ ຖືກ*

**31** *ການຂ້າຊະເຕຟາໂນ ແລະ ການຂົ່ມເຫັງຄຼິດສະຕຽນໃນກຸງເຢລູຊາເລັມ.*

**32** *ຟີລິບ*